ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ກະຊວງການເງິນ

ກົມສ່ວຍສາອາກອນ

ເລກທີ 2050 /ກງ.ກສອ

ນະຄອນຫລວງວຽງຈັນ, ວັນທີ 05 MAR 2015

## ແຈ້ງການເພີ່ມເຕີມ

ເຖິງ: ຫົວໜ້າພະແນກສ່ວຍສາອາກອນ ປະຈຳນະຄອນຫຼວງວຽງຈັນ.

ເລື່ອງ: ການເຮັດທົດລອງນຳໃຊ້ລະບົບຄອມພິວເຕີ ຄຸ້ມຄອງການລົງທະບຽນຍານພາຫະນະ ແລະ ການເສຍຄ່າທຳນຽມທາງ ສົກປີ 2015 ຂອບເຂດນະຄອນຫລວງວຽງຈັນ.

- ອີງຕາມ ຂໍ້ຕົກລົງຂອງທ່ານລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 3398/ກງ, ລົງວັນທີ 07 ຕຸລາ 2014 ວ່າດ້ວຍການອານຸມັດໃຫ້ ເຮັດທົດລອງແລ່ນລະບົບຂໍ້ມູນຂ່າວສານ (IT) ເພື່ອຄຸ້ມຄອງເກັບອາກອນປະເພດຕ່າງໆ ຈາກຍານພາຫະນະ;
- ອີງຕາມທິດຊີ້ນຳຂອງຄະນະນຳກະຊວງການເງິນ ວ່າດ້ວຍໃຫ້ເຮັດທົດລອງແລ່ນລະບົບຄຸ້ມຄອງອາກອນ ແລະຄ່າທຳນຽມ ຢູ່ນະຄອນຫລວງວຽງຈັນ;
- ອີງຕາມແຈ້ງການຂອງທ່ານ ຫົວໜ້າກົມສ່ວຍສາອາກອນ ສະບັບເລກທີ 1783/ກງ.ກສອ, ລົງວັນທີ 17 ກຸມພາ 2015 ວ່າດ້ວຍການເສຍຄ່າທາງ ສົກປີ 2015.

ກົມສ່ວຍສາອາກອນ ຂໍຖືເປັນກຽດແຈ້ງການເພີ່ມເຕີມມາຍັງທ່ານ ຫົວໜ້າພະແນກສ່ວຍສາອາກອນນະຄອນຫຼວງ ກ່ຽວກັບການຈັດຕັ້ງປະຕິບັດເກັບຄ່າທຳນຽມທາງ ສົກປີ 2015 ດັ່ງນີ້:

1. ສຳລັບນະຄອນຫລວງວຽງຈັນ ກຳນົດເລີ່ມເສຍຄ່າທາງປະຈຳປີ 2015 ຕັ້ງແຕ່ວັນຈັນ ທີ **16 ມີນາ 2015** ເປັນຕົ້ນໄປ;
2. ການເສຍຄ່າທາງປະຈຳ 2015 ຈະນຳໃຊ້ລະບົບຄອມພິວເຕີ ຄຸ້ມຄອງການລົງທະບຽນຍານພາຫະນະ ແລະຈຳໜ່າຍໃບວິງກົມ, ຊຶ່ງລະບົບດັ່ງກ່າວຈະຕິດຕັ້ງນຳໃຊ້ຢູ່ກົມອາກອນ, ພະແນກອາກອນນະຄອນຫຼວງ, ຫ້ອງການອາກອນປະຈຳ 9 ເມືອງອ້ອມຂ້າງຂະຄອນຫຼວງ, ຈຸງານອາກອນປະຈຳຕະຫລາດເຊົ້າ, ຈຸງານອາກອນປະຈຳ ກອງພາຫະນະທົ່ງປົ່ງ, ສູນບໍລິການຜູ້ເສຍອາກອນ (ໂພນໄຊ);
3. ສຳລັບລາຍລະອຽດອື່ນຂອງການເກັບຄ່າເກັບປະຈຳປີ 2015 ແມ່ນໃຫ້ອີງໃສ່ແຈ້ງການ ຫົວໜ້າກົມສ່ວຍສາອາກອນ ສະບັບເລກທີ 1783/ກງ.ກສອ, ລົງວັນທີ 17 ກຸມພາ 2015 ກ່ຽວກັບການເສຍຄ່າທາງປະຈຳປີ 2015.

ດັ່ງນັ້ນຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມສ່ວຍສາອາກອນ

ກະຊວງການເງິນ ກົມສ່ວຍສາອາກອນ